# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 9 ພຶສພາ 2010 (5-9-2010)

## ຂ້ອຍຮັບເອົາເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 2:23-25; ມາລາກີ 2:13-15; ມັດທາຍ 19:3-12

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ຈະເພີ້ມການຕັດສິນໃຈຂອງທ່ານໃຫ້ເຮັດຕາມການແຕ່ງງານຕາມຫຼັກພຣະຄັມພີເພື່ອໃຫ້ເປັນການສັນຍາອັນຍາວນານຂອງຊີວິດ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ແມ່ນກ່ຽວກັບການເຂົ້າໃຈຈຸດປະສົງຂອງພຣະເຈົ້າສຳລັບການແຕ່ງງານທີ່ເປັນການຕັດສິນໃຈອັນຍາວນານຊົ່ວຊີວິດແລະຄວາມຕ້ອງການອັນໝັ້ນຄົງສຳລັບພວກເຮົາຄືຕັດສິນໃຈແນ່ວແນ່ໃນການເປັນຜູ້ອຸປຖຳ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ຈາກການຄົ້ນຄວ້າເມື່ອບໍ່ນານມານີ້ໃນຖ້າມກາງພວກເຖົ້າກະສຽນທີ່ໄດ້ແຕ່ງງານເປີດເຜີຍໃຫ້ເຫັນວ່າ, ນຶ່ງໃນສາມຄູ່ຈະປະສົບກັບການຢ່າຮ້າງກັນ, ແລະພວກທີ່ບັງເກີດໃໝ່ເປັນຄຣິສຕຽນກໍມີການຢ່າຮ້າງກັນຄືກັບພວກທີ່ບໍ່ເປັນຄຣິສຕຽນ. ຫຼັກຖານຍັງໄດ້ຊີ້ໃຫ້ເຫັນວ່າພວກເຖົ້າກະສຽນລຸ້ນໜຸ່ມກວ່າຍັງມີແນວຄິດທີ່ຊອບໃນການແຕ່ງງານກັບຫຼາຍໆຄົນ, ຄືແຕ່ງງານສອງຫຼືສາມເທື່ອ, ການຊອກຫາຄູ່ຄອງໃໝ່ໃນແຕ່ລະຂັ້ນຕອນການປ່ຽນແປງຂອງຊີວິດໃນວັຍກະສຽນຂອງພວກເຂົາ. ພຣະຄັມພີສອນວ່າການແຕ່ງງານແມ່ນການຕັດສິນໃຈອັນຍາວນານຊົ່ວຊີວິດລະຫວ່າງຊາຍຜູ້ນຶ່ງ, ຍິງຜູ້ນຶ່ງ, ແລະພຣະເຈົ້າ.

ສະມັຍທີ່ຍັງເປັນເດັກນ້ອຍ, ຂ້າພະເຈົ້າໄດ້ຖາມແມ່ວ່າເປັນຫຍັງຄົນຈຶ່ງຢ່າຮ້າງກັນ. ຂ້າພະເຈົ້າຍັງຈຳຄຳຕອບຂອງແມ່ໄດ້: “ເພາະວ່າພວກເຂົາເວົ້າແນວບໍ່ດີຫຼາຍຢ່າງຕໍ່ກັນແລະກັນພວກເຂົາຈຶ່ງບໍ່ສາມາດຢູ່ຮ່ວມກັນໄດ້ອີກ.” ສອງສາມປີຜ່ານມາ, ພໍ່ແມ່ຂອງຂ້າພະເຈົ້າກໍຢ່າຮ້າງກັນຫຼັງຈາກຢູ່ຮ່ວມກັນເກືອບເຖິງຊາວປີ. ບັນຫາພື້ນຖານຂອງມັນກໍແມ່ນການບໍ່ສາມາດລຶບລ້າງຄວາມເຈັບປວດຫຼາຍຢ່າງທີ່ທຳລາຍການເປັນນຶ່ງດຽວກັນຂອງພວກເຂົາ.

ທີ່ແກ່ນແທ້ຂອງການຢ່າຮ້າງແມ່ນຄວາມເຫັນແກ່ຕົວ, ທາງຝ່າຍຄວາມຮູ້ສຶກແລະຝ່າຍຈິດວິນຍານທີ່ຍັງອ່ອນຢູ່, ແລະຄວາມບໍ່ເຕັມໃຈຍອມຮັບເອົາຕົວຢ່າງອັນດີເລີດຂອງການແຕ່ງງານທີ່ພຣະເຈົ້າໄດ້ມອບໃຫ້ນັ້ນ. ໃນຖານະທີ່ເປັນຄຣິສຕຽນທີ່ເຕີບໃຫຍ່ໃນອົງພຣະຜູ້ເປັນເຈົ້າທັງຄູ່ພວກເຂົາສາມາດພົບພຣະຄຸນທີ່ມີໄວ້ແລ້ວສຳລັບຊີວິດແຕ່ງງານຂອງພວກເຂົາໃຫ້ກາຍເປັນສິ່ງທີ່ເຂັ້ມແຂງແລະໃຫ້ພຣະຄຣິດເປັນສູນກາງ.

## <u>ສຶກສາພຣະຄັມພີ</u>

### 1. <u>ເມື່ອ 1 + 1= 1</u> (ປະຖົມມະການ 2:23-25)

ຄຳສາບານໃນພິທີແຕ່ງງານແມ່ນຮວມທັງຄຳວ່າ, "ຂ້ອຍຮັບເອົາເຈົ້າມາເປັນເມັຽ" ຫຼື "ຜົວ," ການທຳສັນຍາຕໍ່ໜ້າພຣະເຈົ້າ, ຄອບຄົວ, ແລະເພື່ອນຝູງຫຼາຍຄົນວ່າເປັນການຕັດສິນໃຈອັນຍາວນານເທົ່າສັງຊີວິດ. ໃນຖານະທີ່ເປັນພາກສ່ວນນຶ່ງຂອງການແຕ່ງງານຄູ່ທຳອິດ, ໜ້າທີ່ຂອງອາດາມຄືສະແດງຄວາມເພິ່ງພໍໃຈຂອງລາວໃຫ້ກັບເອວາໃນຕອນທ້າຍທີ່ລາວໄດ້ຮັບຄູ່ຄອງທີ່ຄ້າຍຄືລາວເອງ, ຊຶ່ງອອກຈາກກະດູກແລະເນື້ອໜັງອັນດຽວກັນ. "ນີ້ແຫຼະຄືເຫດຜົນ" ທີ່ໄດ້ບັນລະຍາຍເຖິງການເປັນນຶ່ງດຽວກັນຂອງອາດາມແລະເອວາ: ພຣະເຈົ້າໄດ້ຊົງສ້າງການແຕ່ງງານຂຶ້ນກ່ອນໆທີ່ພຣະອົງໄດ້ສ້າງຕັ້ງການເປັນພໍ່ແມ່. ສາຍສັມພັນຂອງການແຕ່ງງານແມ່ນພື້ນຖານອັນແໜ້ນແກ່ນຂອງສັງຄົມມະນຸດ.

ການແຕ່ງງານຕາມແບບພຣະຄັມພີໝາຍເຖິງວ່າພວກເຮົາ (1) **ອອກຈາກ**ພໍ່ແມ່ຂອງພວກເຮົາ, (2) ເປັນນຶ່ງດຽວກັນຕໍ່ສາຍຕາຂອງພຣະເຈົ້າ, ແລະ (3) ໃຫ້ຄຳສາບານຕໍ່ມວນຊົນແລະເຮັດຖືກຕ້ອງຕາມກົດໝາຍດັ່ງເຊັ່ນ(ຈັດພິທີແຕ່ງງານ)ເປັນຕົ້ນ. ພວກເຮົາຍັງມີເງື່ອນໄຂທີ່ຈະເບິ່ງແຍງພໍ່ແມ່ຂອງພວກເຮົາ; ແຕ່ວ່າການເປັນນຶ່ງດຽວກັນໃນສາຍຕາຂອງພຣະເຈົ້າໝາຍເຖິງເປັນຜົວເປັນເມັຽກັນ, ພວກເຮົາກັບກາຍມາເພິ່ງພາອາສັຍຊຶ່ງກັນແລະກັນ. ພວກເຮົາ**ກາຍເປັນກາຍອັນດຽວກັນ**; ການເປັນນຶ່ງດຽວກັນນີ້ແມ່ນສະແດງອອກທາງຝ່າຍຮ່າງກາຍ, ທາງຄວາມຮູ້ສຶກ, ທາງສັງຄົມ, ແລະທາງຝ່າຍຈິດວິນຍານ. ດັ່ງທີ່ອາດາມແລະເອວາ**ບໍ່ໄດ້ຮູ້ອາຍ**ຕໍ່ຊຶ່ງກັນແລະກັນເມື່ອພວກເຂົາຢູ່ຮ່ວມກັນຊຶ່ງຊີ້ໃຫ້ເຫັນຄຸນສົມບັດແລະການກະທຳຂອງຄວາມຮັກແລະສນັບສນູນ.

ການເປັນນຶ່ງດຽວກັນຝ່າຍວິນຍານໃນການແຕ່ງງານໝາຍຄວາມວ່າເມັຽແລະຜົວຊຶ່ງເປັນຄູ່ຄອງກັນເພື່ອສະງ່າຣາສີຂອງພຣະເຈົ້າ. ການຝຶກແອບຕາມຫຼັກການນີ້ແມ່ນບໍ່ໄດ້ກີດກັ້ນຕໍ່ພຣະພອນທີ່ຈະໄດ້ຈາກເບື້ອງເທິງໃນຊີວິດແຕ່ງງານ; ຄູ່ຜົວເມັຽບໍ່ແມ່ນຜູ້ທີ່ບັງເອີນໄດ້ເດີນຮ່ວມເສັ້ນທາງດຽວກັນໃນຂນະນັ້ນ, ແຕ່ວ່າເປັນຜູ້ທ່ອງທ່ຽວຕິດຕາມພຣະຄຣິດນຳກັນ, ມີຄວາມຍິນດີໃນຄວາມຮັກແລະສາມັກຄີທັມກັບຊຶ່ງກັນແລະກັນ. ບັນຫາທີ່ແທ້ຈິງຂອງການແຕ່ງງານກໍຄືຄວາມເຫັນແກ່ຕົວເອງ-ຄູ່ຜົວເມັຽຜູ້ທີ່ເຫັນວ່າການແຕ່ງງານກໍຄືເພື່ອໃຫ້ຄວາມຝັນແລະຄວາມຕ້ອງການຂອງພວກເຂົາໃຫ້ໄດ້ສົມດັ່ງໃຈ.

ຄູ່ຜົວເມັຽໃດທີ່ເຫັນການແຕ່ງງານເປັນການຕັດສິນໃຈອັນຍາວນານຊົ່ວຊີວິດໃນການຕິດຕາມພຣະຄຣິດຮ່ວມກັນກໍສາມາດຫວັງໃຫ້ພຣະເຈົ້ານຳພາພວກເຂົາໄປໃນທາງດຽວກັນ, ປະທານຄວາມຊົມຊື່ນຍິນດີແລະພາຣະໜັກຕ່າງໆອັນດຽວກັນ, ເພື່ອເພີ້ມເຕີມຄວາມຮັກຂອງພວກເຂົາເພື່ອຊຶ່ງກັນແລະກັນ, ແລະຊົງໃຊ້ພວກເຂົາໃນວຽກງານຂອງພຣະອົງ. ພວກເຂົາອາດຈະມີຄວາມແຕກຕ່າງກັນຫຼາຍໃນດ້ານພອນສວັນແລະນິສັຍໃຈຄໍຕ່າງໆ, ແຕ່ວ່າພວກເຂົາສນັບສນູນຊຶ່ງກັນແລະກັນແລະຕິດຕາມພຣະຄຣິດຮ່ວມກັນ.

## 2. <u>ຄຳໝັ້ນສັນຍາທີ່ເປັນການຕິດຕໍ່ພົວພັນ</u> (ມາລາກີ 2:13-15)

ມາລາກີໄດ້ທຳນວາຍໄວ້ປະມານ 430 ປີກ່ອນ ຄ.ສ. ຫຼັງຈາກພວກອິສຣາເອນໄດ້ກັບຄືນມາກຸງເຢຣູຊາເລັມຈາກການຖືກຈັບໄປເປັນຊະເລີຍທີ່ກຸງບາບີໂລນ. ການເຮັດແບບໜ້າຊື່ໃຈຄົດໄດ້ແຜ່ກ້ວາງອອກໄປ-ເປັນພິເສດໃນຖ້າມກາງພວກປະໂຣຫິດ. ພວກເຂົາສະແດງໃຫ້ຄົນອື່ນເຫັນວ່າຕົນເອງເຮັດເພື່ອພຣະນາມພຣະເຈົ້າ, ຖວາຍສັດແບບເຢາະເຢີ້ຍ, ຂາດການສິດສອນຄວາມຈິງ, ບໍ່ໃສ່ໃຈຕໍ່ການຖວາຍນຶ່ງສ່ວນສິບ, ແລະນຳຄົນອື່ນໃຫ້ເຮັດຄວາມຜິດບາບ. ພວກເຂົາໄດ້ເປີດເຜີຍໃຫ້ເຫັນຄວາມຊຸດໂຊມຂອງຝ່າຍຈິດວິນຍານຂອງພວກເຂົາໂດຍການມີສ່ວນໃນການຢ່າຮ້າງ. ພວກເຂົາ**ຫຼັ່ງນ້ຳຕາອ້ອມຮອບແທ່ນບູຊາ**ຂອງອົງພຣະຜູ້ເປັນເຈົ້າ, ຮ້ອງທຸກເສັຍດາຍພຣະພອນໄປສູ່ຄວາມສຸກທີ່ພຣະເຈົ້າໄດ້ຊົງສັນຍາໄວ້ແລ້ວ (ລະບຽບພວກເລວີ 26:3-13), ແຕ່ວ່າພວກເຂົາບໍ່ໄດ້ເຕັມໃຈສາຣະພາບແລະປ່ຽນແປງການປະພຶດຂອງພວກເຂົາ.

ການຢ່າຮ້າງໄດ້ແຜ່ຫຼາຍຈົນພຣະເຈົ້າໄດ້ກ່າວຕໍ່ປະເທດວ່າມີຊາຍທີ່ໄດ້**ປະພຶດຢ່າງທໍຣະຍົດ**, ຫຼືເຮັດຢ່າງບໍ່ສັດຊື່**ຕໍ່ເມັຽ**ທີ່ໄດ້ໃນຕອນ**ຍັງໜຸ່ມ**. ພຣະເຈົ້າຖືວ່າການແຕ່ງງານແມ່ນການເຮັດໃຫ້ຕິດສນິດກັນ, ເປັນຄຳໝັ້ນສັນຍາລະ

ຫວ່າງຊາຍຜູ້ນຶ່ງແລະຍິງຜູ້ນຶ່ງທີ່ມີຕໍ່ກັນຈົນສຸດຊີວິດ.

ພຣະເຈົ້າໄດ້ຊົງສ້າງການແຕ່ງງານໃຫ້ເປັນສະຖາບັນທຳອິດຂອງສັງຄົມມະນຸດ; ບໍ່ມີສັງຄົມໃດສາມາດລະເລີຍຕໍ່ຄວາມສຳຄັນຂອງມັນໂດຍປາສຈາກບັນຫາຄວາມຫຍຸ້ງຍາກຕ່າງໆທີ່ເກີດຕາມມານັ້ນ. ຄຳໝັ້ນສັນຍາໃນສມັຍຂອງພຣະຄັມພີເປັນຄຳສາບານຢ່າງຈິງຈັງຂອງຜູ້ນຶ່ງທີ່ໄດ້ຕັດສິນໃຈເດັດດ່ຽວເພື່ອໃຫ້ສະພາບການນັ້ນຄົບບໍຣິບູນ. ຄຳສັນຍາທຸກຢ່າງທີ່ຈະໃຫ້ຊຶ່ງໄດ້ເປັນການຕັດສິນໃຈຢ່າງເດັດຂາດຕລອດຊີວິດໃນຕອນພິທີແຕ່ງງານນັ້ນມັນບໍ່ພຽງແຕ່ສຳລັບຄູ່ຄອງເທົ່ານັ້ນແຕ່ວ່າສຳລັບພຣະເຈົ້າດ້ວຍ. ຜູ້ໃດກໍຕາມທີ່ຫັກຫຼັງຄູ່ຄອງຂອງຕົນຈະຕ້ອງໃຫ້ການກັບພຣະອົງ.

ເປົ້າໝາຍອັນນຶ່ງຂອງການແຕ່ງງານແມ່ນເພື່ອສ້າງລູກໆໃນທາງຂອງພຣະເຈົ້າ, ຄືພວກທີ່ເຕີບໂຕຂຶ້ນໃນເຮືອນທີ່ເຕັມດ້ວຍຄວາມຮັກແລະຄວາມໝັ້ນຄົງ. ການຢ່າງຮ້າງແມ່ນເຮັດໃຫ້ເຮືອນຂາດຄວາມໝັ້ນຄົງ. ພວກໃຫ້ຄຳປຶກສາຫຼາຍໆຄົນເຫັນເປັນເອກກະສັນວ່າບໍ່ພຽງແຕ່ຜູ້ໃຫຍ່ໄດ້ຮັບຄວາມເຈັບປວດ, ແຕ່ວ່າພວກລູກໆທີ່ຢູ່ໃນການຢ່າຮ້າງກໍໄດ້ຮັບຜົນເສັຽອັນໃຫຍ່ຫຼວງຕ່າງໆຕລອດຊົ່ວຊີວິດ. ຄວາມຮູ້ສຶກໃນການຖືກປະຖິ້ມເຮັດໃຫ້ສູນເສັຽຄຸນຄ່າຂອງຄວາມເປັນຄົນແລະຄວາມໝັ້ນໃຈ. ຄະແນນໃນໂຮງຮຽນກໍຕົກຕໍ່າລົງ, ຄວາມຂັດແຍ້ງສ່ວນຕົວກໍເພີ້ມທະວີຂຶ້ນ; ສິ່ງເຫຼົ່ານີ້ມີຜົນສະທ້ອນຕໍ່ສາຍສັມພັນໃນໜ້າທີ່ວຽກງານແລະໃນການແຕ່ງງານພາຍຫຼັງຕໍ່ມາຂອງຊີວິດ. ບາງທີອາດຈະເປັນປໂຍກທີ່ນຳຄວາມໂສກເສົ້າທີ່ສຸດໃຫ້ແກ່ພວກລູກໆຂອງການຢ່າຮ້າງ, ດັ່ງເຊັ່ນຂ້າພະເຈົ້າ, ໄດ້ໃຫຍ່ຂຶ້ນໂດຍປາສຈາກພາບພົດວ່າບ້ານເຮືອນແບບຄຣິສຕຽນຄວນຈະເປັນຢ່າງໃດ.

## 3. <u>ການຕັດສິນໃຈເດັດດ່ຽວຊົ່ວຊີວິດ</u> (ມັດທາຍ 19:3-12)

ໃນຊ່ວງເວລາຂອງພຣະເຢຊູ, ຄວາມຄິດໃນໂຮງຮຽນຂອງອາຈານຮຽວໂຮໄດ້ອະນຸຍາດໃຫ້ຢ່າງຮ້າງໄດ້ເກືອບທຸກໆເຫດຜົນ(ແມ້ກະທັ້ງຄົວກິນບໍ່ແຊບ); ຄວາມຄິດໃນໂຮງຮຽນຂອງອາຈານແຊມມີອະນຸຍາດໃຫ້ຢ່າຮ້າງໄດ້ແຕ່ໃນກໍຣະນີຫຼິ້ນຊູ້ຕໍ່ກັນເທົ່ານັ້ນ. ຄຳຖາມຂອງພວກຟາຣີຊາຍກ່ຽວກັບ**ເຫດຜົນ**ຂອງ**ການຢ່າຮ້າງ**ເພື່ອຢາກນຳພຣະເຢຊູໃຫ້ຕົກຢູ່ໃນຫົວຂໍ້ເຣື່ອງທີ່ມີການແບ່ງແຍກອັນຫຍຸ້ງຍາກ. ພຣະຄຣິດໄດ້ຕອບໂດຍອ້າງເຖິງພຣະທັມປະຖົມມະການ 1:27 ແລະ 2:24. ພຣະອົງຢັ້ງຢືນເຖິງການເປັນນຶ່ງດຽວກັນແລະຄວາມຖາວອນຂອງສາຍສັມພັນໃນຊີວິດແຕ່ງງານ-ພວກເຂົາເປັນກາຍອັນດຽວກັນ- ແລະໄດ້ບັນຊາເພີ້ມກ່ຽວກັບການບໍ່ໃຫ້ແຍກຈາກກັນວ່າຊຶ່ງພຣະເຈົ້າໄດ້**ຊົງໃຫ້ເຂົ້າຮ່ວມແອກັນແລ້ວນັ້ນ**. ຄຳເວົ້າເຫຼົ່ານີ້, ສ່ວນຫຼາຍແລ້ວແມ່ນບໍ່ໄດ້ກ່າວເຖິງໃນພິທີແຕ່ງງານຊຶ່ງເປີດເຜີຍໃຫ້ເຫັນເຖິງຄວາມໝັ້ນຄົງຖາວອນອັນຕລອດໄປຂອງຊີວິດແຕ່ງງານ.

> ເພາະພຣະຄຸນຂອງພຣະເຈົ້າເທົ່ານັ້ນ, ໃຜກໍຕາມທີ່ປະສົບກັບການຢ່າຮ້າງກໍສາມາດຮັບເອົາການຍົກໂທດບາບຈາກພຣະອົງ, ການຊຳຣະລ້າງຂອງພຣະອົງ, ການແຕະຕ້ອງຢຽວຢາຂອງພຣະອົງ, ແລະການຕິດຕັ້ງຂຶ້ນໃໝ່ໃນຄວາມຊົມຊື່ນຍິນດີແລະໃນຄວາມຫວັງ.

ໃນສມັຍຂອງໂມເຊໄດ້ອະນຸຍາດໃຫ້ມີການຢ່າຮ້າງເພາະວ່າມະນຸດຍິນຍອມຕໍ່ຄວາມຜິດບາບ, ມີ**ໃຈທີ່ແຂງກະດ້າງ** (ພຣະບັນຍັດສອງ 24:1-4). ບັນຫາກໍຄືວ່າພວກເຂົາຈົດຈໍ່ໃສ່ການຍອມຈຳນົນຕໍ່ການຢ່າຮ້າງແທນທີ່ຈະຈົດຈໍ່ໃສ່ກົດລະບຽບຊີວິດແຕ່ງງານ. ຄູ່ຜົວເມັຽຕ້ອງຫຼີກເວັ້ນການຊອກຫາຂໍ້ແກ້ຕົວໃນການແຍກຈາກກັນແລະໃຫ້ຈົດຈໍ່ໃສ່ເຫດຜົນທີ່ຈະຢູ່ຮ່ວມກັນຕໍ່ໄປ.

ພຣະຄຣິດໄດ້ຈົດຈໍ່ໃສ່ກົດລະບຽບ, ແຕ່ເມື່ອເດີມບໍ່ເປັນຢ່າງນັ້ນ. ເພາະພຣະຄຸນຂອງພຣະເຈົ້າເທົ່ານັ້ນ, ໃຜກໍຕາມທີ່ປະສົບກັບການຢ່າຮ້າງກໍສາມາດຮັບເອົາການຍົກໂທດບາບຈາກພຣະອົງ, ການຊຳຣະລ້າງບາບຈາກພຣະອົງ,

ການແຕະຕ້ອງຢຽວຢາຈາກພຣະອົງ, ແລະການກໍ່ສ້າງຂຶ້ນໃໝ່ໃນຄວາມຊື່ນຊົມຍິນດີແລະໃນຄວາມຫວັງ. ພວກເຂົາສາມາດຢືນຢູ່ຢ່າງມີກຽດສັກສີກັບພວກທີ່ມີຄວາມເຊື່ອຄົນອື່ນໆ, ແຕ່ວ່າພວກເຮົາທຸກຄົນຕ້ອງຕັດສິນໃຈແນ່ວແນ່ໃສ່ການແຕ່ງງານຈົນສຸດຊີວິດວ່າເປັນແບບແຜນອັນດີເລີດຂອງພຣະເຈົ້າ.

ການໂຕ້ຕອບຂອງພວກສາວົກກໍແບບຕົກຕະລຶງ, ທີ່ພວກເຂົາເວົ້າວ່າ, **ຖ້າລັກສະນະຜົວເມັຽເປັນຢ່າງນັ້ນ, ການເອົາຜົວເມັຽກໍບໍ່ເປັນປໂຍດ**. ພຣະຄຣິດໄດ້ເວົ້າວ່າບໍ່ແມ່ນໝົດທຸກຄົນທີ່ຈະ**ຮັບປະຕິບັດຕາມຂໍ້ນີ້ໄດ້**, ນີ້ແມ່ນເນັ້ນໃສ່ການສິດສອນຂອງພຣະອົງເຣື່ອງຄວາມຍືນຍາວຖາວອນຂອງການແຕ່ງງານ. ພວກສະລະເພດກໍມີຫຼາຍເຫດຜົນດ້ວຍກັນ, ແຕ່ວ່າມີບາງຄົນກໍເລືອກທີ່ຍົກເລີກບໍ່ແຕ່ງງານເລີຍແລະສືບຕໍ່ຢູ່ເປັນໂສດເພາະຕັດສິນໃຈເປັນຄຣິສຕຽນ. (ເບິ່ງ 1 ໂກຣິນໂທ 7:32-35) ພວກຄົນໂສດທີ່ເຖິງກະສຽນແລ້ວແມ່ນພວກທີ່ທາງໂບດຄວນມອງເຫັນຄຸນຄ່າທີ່ພວກເຂົານຳມາປະກອບສ່ວນໃນການເສີມສ້າງຣາຊອານາຈັກຂອງພຣະເຈົ້າ.

## <u>ບົດຮຽນຊີວິດ</u>

ການແຕ່ງງານໄດ້ຖືກສ້າງຂຶ້ນໂດຍພຣະເຈົ້າໃຫ້ເປັນການຕັດສິນໃຈເດັດຂາດອັນຍາວນານຊົ່ວຊີວິດຂອງສອງຄົນຜູ້ຊຶ່ງສ້າງນາມຍົດໃໝ່ໃນຄວາມເປັນນຶ່ງດຽວໃນຝ່າຍຮ່າງກາຍ, ຝ່າຍຄວາມຮູ້ສຶກ, ຝ່າຍສັງຄົມແລະຝ່າຍຈິດວິນຍານ. ການແຕ່ງງານແມ່ນຄຳໝັ້ນສັນຍາສາຍສັມພັນເພື່ອຖວາຍກຽດແກ່ພຣະເຈົ້າ, ເພື່ອຊຸບລ້ຽງເຊື້ອສາຍໃຫ້ຢູ່ໃນທາງຂອງພຣະເຈົ້າ, ແລະເພື່ອຜົນປໂຍດຂອງສັງຄົມແລະຄວນຈະປົກປ້ອງຮັກສາໄວ້ແລະເຮັດໃຫ້ເຂັ້ມແຂງຂຶ້ນ-ບໍ່ແມ່ນເພື່ອຫວັງປ່ຽນຄວາມໝາຍໃໝ່ເໝືອນດັ່ງທີ່ບາງຄົນກຳລັງເຮັດຢູ່ນັ້ນ.

ພວກເຮົາຈະເອົາການອອກແບບການແຕ່ງງານຂອງພຣະເຈົ້າມາໃຊ້ໃນຊີວິດຂອງພວກເຮົາໄດ້ຢ່າງໃດ?

- ເສີມສ້າງໃຫ້ຄວາມສັມພັນເຂັ້ມແຂງກັບຄູ່ຄອງຊຶ່ງຮວມທັງການຈັບຕ້ອງຮ່າງກາຍຢ່າງມີຄວາມໝາຍ, ສນັບສນູນທາງດ້ານຄວາມຮູ້ສຶກ, ແລະເປັນນຶ່ງດຽວກັນຝ່າຍຈິດວິນຍານ.
- ໃຊ້ເວລາເຮັດບາງສິ່ງບາງຢ່າງຮ່ວມກັນ, ຮັບຟັງຊຶ່ງກັນແລະກັນ, ແລະການອ້ອນວອນອະທິຖານແລະການອ່ານພຣະຄັມພີຮ່ວມກັນ.
- ໃຫ້ຖືເອົາຄວາມສຳຄັນທີ່ພຣະເຈົ້າປະທານໃຫ້ເຫິງການແຕ່ງງານຄຳໝັ້ນສັນຍາແລະຄຳສາບານອັນຍິ່ງໃຫຍ່ທີ່ທ່ານໄດ້ຮັບເອົາຕໍ່ໜ້າພຣະອົງໃນຕອນທີ່ທ່ານແຕ່ງງານ.
- ຕັດສິນໃຈໃຫ້ແນ່ວແນ່ອີກເທື່ອນຶ່ງທີ່ຈະສັດຊື່ຕໍ່ຄູ່ຄອງຂອງທ່ານເໝືອນເປັນເພື່ອນຮ່ວມງານຝ່າຍຮ່າງກາຍ, ໃນການສນັບສນູນທາງຄວາມຮູ້ສຶກ, ແລະໂດຍຜ່ານການເປັນນຶ່ງດຽວກັນຝ່າຍຈິດວິນຍານ.
- ຊອກຫາຈຸດດີຫ້າຢ່າງໃນຊີວິດແຕ່ງງານຂອງທ່ານທີ່ເຂັ້ມແຂງທີ່ສຸດແລະຊອກຫາທາງເພື່ອທ່ານຈະເຕີບໃຫຍ່ຂຶ້ນ.
- ຊອກຫາຈຸດອ່ອນຫ້າຈຸດໃນຊີວິດແຕ່ງງານຂອງທ່ານເໝືອນກັນ, ຄືບ່ອນທີ່ຜີມານຊາຕານຈະສາມາດ, ຖ້າມັນພຍາຍຍາມ, ສ້າງສິ່ງທີ່ແຕກແຍກ. ທ່ານຈະເຮັດແນວໃດເພື່ອເສີມສ້າງໃຫ້ຈຸດເຫຼົ່ານີ້ເຂັ້ມແຂງຂຶ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA